


**ນາງ ອໍລະໄທ ແກ້ວດວງສີ**
**Olathay Keodouangsy**
ຄະນະອັກສອນສາດ ພາກວິຊາພາສາຍີ່ປຸ່ນ
ມະຫາວິທະຍາໄລແຫ່ງຊາດລາວ
**Facluty of Letters**
**National University of Laos**

<Programs to have participated>

"Short-term Course for ASEAN Students 2016" hosted by
**School of Information and Communication,**
**Meiji University**

1. **ເລີ່ມຮຽນພາສາຍີ່ປຸ່ນເມື່ອໃດ?**
   ເລີ່ມຮຽນພາສາຍີ່ປຸ່ນຄັ້ງທຳອິດເມື່ອເຂົ້າຮຽນມະຫາວິທະຍາໄລ.
2. **ເປັນຫຍັງຈຶ່ງຢາກໄປຍີ່ປຸ່ນ**?
   ຍີ່ປຸ່ນເປັນປະເທດທີ່ໃຜໆກໍ່ຢາກໄປເພາະເປັນປະເທດທີ່ມີຄວາມຈະເລີນບໍ່ວ່າດ້ານໃດໆ. ສຳລັບຂ້ອຍຄິດວ່າ ຖ້າຂ້ອຍໄດ້ໄປຍີ່ປຸ່ນ,ໄດ້ຮຽນກັບຄົນຍີ່ປຸ່ນ
   ໄດ້ໃຊ້ພາສາຍີ່ປຸ່ນທຸກມື້ ຂ້ອຍຈະຕ້ອງເກັ່ງພາສາຍີ່ປຸ່ນຂຶ້ນແນ່ນອນ
   ຍິ່ງໄປກວ່ານັ້ນແລ້ວ ຂ້ອຍຢາກຈະຮູ້ວ່າຍີ່ປຸ່ນເປັນແບບໃດ
   ເປັນຄືທີ່ຄົນອື່ນເລົ່າບໍເລີຍມາຢາກສຳຜັດກັບໂຕເອງແລະນອກຈາກນີ້ຂ້ອຍຍັງຢາກຫາແຮງບັນດານໃຈໃນການຮຽນພາສາຍີ່ປຸ່ນເພີ່ມຂຶ້ນ.
3. **ເປັນຫຍັງຈຶ່ງຢາກເຂົ້າຮ່ວມໂປແກມຂອງມະຫາວິທະຍາໄລເມຈິ**?
   ມະຫາວິທະຍາໄລເມຈິເປັນມະຫາວິທະຍາໄລທີ່ໃຫຍ່
   ຄົນທີ່ເຄີຍເຂົ້າຮ່ວມໂປແກມນີ້ໃນແຕ່ລະປີບອກວ່າໄດ້ປະສົບການດີໆຫຼາຍຢ່າງຈາກການເຂົ້າຮ່ວມໂປແກມ  ຍິ່ງໄປກວ່ານັ້ນແລ້ວ
   ເມື່ອຂ້ອຍໄດ້ເຂົ້າຮ່ວມໂປແກມນີ້ຂ້ອຍກໍ່ໄດ້ຮູ້ຫຼາຍໆຢ່າງກ່ຽວກັບຍີ່ປຸ່ນແລະເປັນປະໂຫຍດແຕ່ກັບການເຮັດວຽກໃນອະນາຄົດຢ່າງຫຼວງຫຼາຍ
4. **ມີຄວາມປະທັບໃຈອັນໃດແດ່ໃນໂປແກມຂອງມະຫາວິທະຍາໄລເມຈິ?**
   ການໄປຍີ່ປຸ່ນຄັ້ງນີ້ເປັນຄັ້ງທຳອິດສຳລັບຂ້ອຍ
   ກ່ອນມາຍີ່ປຸ່ນຂ້ອຍເວົ້າພາສາຍີ່ປຸ່ນບໍ່ເກັ່ງປານໃດ
   ດັ່ງນັ້ນການໄປຍີ່ປຸ່ນຄັ້ງນີ້ຈຶ່ງມີປະໂຫຍດໃນການເຝິກຊ້ອມພາສາຍີ່ປຸ່ນຂອງຂ້ອຍ.
   3ອາທິດທີ່ໄດ້ມາຍີ່ປຸ່ນໃນຄັ້ງນີ້ຂ້ອຍມຮໂອກາດໄດ້ໃຊ້ພາສາຍີ່ປຸ່ນທຸກມື້

ແລະຍິ່ງໄປກວ່ານັ້ນ
ໃນເວລາຮຽນຂ້ອຍຍັງສາມາດແລກປ່ຽນຄໍາຄິດຄໍາເຫັນກັບຄົນຍີ່ປຸ່ນນໍາອີກ
ໃນທຸກໆມື້ຂອງໂປແກມນີ້ແມ່ນມີແຕ່ເລື່ອງລາວມ່ວນໆ.

5. **ເລື່ອງທີ່ໄດ້ຮຽນຮູ້ຈາກການເຂົ້າຮ່ວມໂປແກມນີ້ແມ່ນຫຍັງແລະມີປະໂຫຍດຕໍ່ກັບອານາຄົດແນວໃດ?**
   3ອາທິດທີ່ຢູ່ຍີ່ປຸ່ນຂ້ອຍໄດ້ຮຽນຮູ້ຫຼາຍໆຢ່າງກ່ຽວກັບຍີ່ປຸ່ນບໍ່ວ່າຈະເປັນວັດທະນະທໍາ, ວິຖີການດໍາລົງຊີວິດ ,ການເດີນທາງດ້ວຍລົດໄຟ, ການກິນຢູ່ຂອງຄົນຍີ່ປຸ່ນແລະອະນາຄົດຂອງຂ້ອຍ
   ຫຼັງຈາກຮຽນຈົບຂ້ອຍຢາກຈະເປັນຄູສອນພາສາຍີ່ປຸ່ນແລະຄິດວ່າການມາຍີ່ປຸ່ນໃນຄັ້ງນີ້ຈະເປັນປະໂຫຍດໃນການເຮັດວຽກກັບຄົນຍີ່ປຸ່ນ
6. **ສິ່ງທີ່ຢາກແນະນໍາໃຫ້ລຸ່ນນ້ອງເຂົ້າຮ່ວມໂປແກມຂອງມະຫາວິທະຍາໄລເມຈິມີຫຍັງແດ່?**
   ໃນໂປແກມນີ້ມີກິດຈະກໍາຕ່າງໆທີ່ມ່ວນ ,ຫນ້າສົນໃຈແລະໃຫ້ຄວາມຮູ້ກ່ຽວກັບຍີ່ປຸ່ນຫຼາກຫຼາຍໄດ້ຮຽນວັດທະນະທໍາຍີ່ປຸ່ນ,
   ໄດ້ເຝິກພາສາຍີ່ປຸ່ນແລະໄດ້ໄປທັດສະນະສະຖານທີ່ຕ່າງໆໃນໂຕກຽວຍິ່ງໄປກວ່ານັ້ນຍັງໄດ້ໝູ່ໃໝ່ແລະພໍ້ສິ່ງໃໝ່ຫຼາກຫຼາຍເຊິ່ງມັນຈະກາຍເປັນປະສົບການທີ່ດີສໍາລັບໂຕເຮົາ.
7. **ໃນອະນາຄົດຢາກເຮັດວຽກຫຍັງ?**
   ຂ້ອຍຢາກເປັນຄູສອນພາສາຍີ່ປຸ່ນທີ່ບ້ານເກີດຂອງຂ້ອຍ.
8. **ໂຕກຽວແລະວຽງຈັນມີຂໍ້ຄ້າຍຄືກັນແລະແຕກຕ່າງກັນແນວໃດ?**
   ວຽງຈັນແລະໂຕກຽວຂ້ອນຂ້າງຈະແຕກຕ່າງກັນຫຼາຍພໍສົມຄວນເພາະວ່າໂຕກຽວເປັນເມືອງທີ່ມີຄວາມສະດວກສະບາຍແລະມີປະຊາກອນອາໄສຢ່າງແໜ້ນຫນາແລະຄ່າຄອງຊີບສູງວຽງຈັນກໍ່ເຊັ່ນກັນແຕ່ວ່າຢູ່ວຽງຈັນບໍ່ຄ່ອຍແອອັດປານໃດ
   ນອກຈາກນີ້ ຢູ່ໂຕກຽວທຸກຢ່າງເປັນລະບຽບແລະສະອາດ
   ມີກົດລະບຽບທີ່ເຄັ່ງຄັດແລະເປັນຂໍ້ດີທີ່ເຮັດໃຫ້ຮູ້ສຶກປອດໄພເມື່ອຢູ່ໂຕກຽວ.

Visit http://www.meiji.ac.jp/infocom/information/2016/6t5h7p00000lslq1.html for more information on Short-term Course for ASEAN Students hosted by School of Information and Communication, Meiji University.